

# Getting Your Child Tested For Lead



## LEAD IS HARMFUL

Lead poisoning can make it hard for your child to learn, pay attention, or behave and may cause long-term health problems. Children may not look or act sick. Having your child tested for lead is the only way to know if there is lead in your child's body.

## WHEN YOUR CHILD SHOULD BE TESTED FOR LEAD

A blood lead test is **required at one and two years old** if your child:

- Is in a program such as **Medi-Cal, WIC[1], or Head Start**.
- Lives in or spends a lot of time in a place built before 1978 that has peeling or chipped paint or that has been recently remodeled.

If these do not apply, ask your child's doctor about their risk of lead exposure. A blood lead test for lead is free for children enrolled in the programs listed above, and health insurance companies will also pay for the test.

## CHILDREN ARE AT A HIGHER RISK FOR LEAD EXPOSURE IF THEY:

- **Live** in a house or building built before 1978 or near a source of lead air emissions such as highways, industrial sites, general aviation airports, recycling sites.
- **Consume or come in contact with** certain foods, spices, traditional remedies, dishware or other products.
- **Spend time** outside the U.S.
- **Have a sibling with** an elevated blood lead level.
- **Have a family member who works with lead** such as construction or painting or has hobbies that involve lead such as stained glass, fishing, pottery, firearms, antiques.

For a list of lead sources, ask your doctor or visit: **go.cdph.ca.gov/LeadFreeKids**

[1]WIC is the Special Supplemental Nutrition Program for Women, Infants, and Children

## WHAT TO EXPECT: BLOOD LEAD TESTING FOR YOUR CHILD



1. The test may be done at your child's doctor's office or at a laboratory.
2. There are two methods of collecting blood for lead testing: capillary or venous. Capillary tests typically use blood taken from your child's finger. Venous tests use blood from a vein in your child's arm.
3. Depending on the result, your child's doctor may order additional tests. Follow-up blood lead tests must be venous.

i For more information visit **go.cdph.ca.gov/LeadFreeKids** or contact your local Childhood Lead Poisoning Prevention Program:

CDPH
California Department of Public Health

10/2024

© 2024, California Department of Public Health



# ການພາລູກຂອງທ່ານໄປຮັບການກວດສອບຫາສານຕະກົ່ວ



## ສານຕະກົ່ວແມ່ນເປັນອັນຕະລາຍ

ຄວາມເປັນພິດຂອງສານຕະກົ່ວສາມາດເຮັດໃຫ້ລູກຂອງທ່ານມີບັນຫາດ້ານການຮຽນຮູ້, ສະມາທິ ຫຼືບັນຫາຄວາມປະພຶດ ແລະອາດຈະເຮັດໃຫ້ເກີດບັນຫາສຸຂະພາບໃນໄລຍະຍາວ. ເດັກນ້ອຍອາດຈະບໍ່ເບິ່ງວ່າເຈັບປ່ວຍ ຫຼືສະແດງອາການເຈັບປ່ວຍ. ການໃຫ້ລູກຂອງທ່ານໄດ້ຮັບການກວດຫາສານຕະກົ່ວເປັນວິທີດຽວທີ່ຈະຮູ້ວ່າມີສານຕະກົ່ວຢູ່ໃນຮ່າງກາຍຂອງລູກຂອງທ່ານ ຫຼື ບໍ່.

## ລູກຂອງທ່ານຄວນໄດ້ຮັບການກວດຫາສານຕະກົ່ວເມື່ອໃດ

**ການກວດຫາສານຕະກົ່ວໃນເລືອດແມ່ນຈໍາເປັນຕ້ອງເຮັດເມື່ອເດັກນ້ອຍອາຍຸໜຶ່ງແລະສອງປີ** ຖ້າລູກຂອງທ່ານ:

- ຢູ່ໃນໂຄງການເຊັ່ນ **Medi-Cal, WIC[1]** ຫຼື **Head Start**.
- ອາໄສຢູ່ ຫຼືໃຊ້ເວລາຫຼາຍໃນສະຖານທີ່ທີ່ສ້າງຂຶ້ນກ່ອນປີ 1978 ທີ່ສີທາຫຼຸດລອກ ຫຼືແຕກເປັນແຜ່ນ ຫຼືມີການປັບປຸງໃໝ່ເມື່ອບໍ່ດົນມານີ້.

ຖ້າສິ່ງເຫຼົ່ານີ້ບໍ່ກ່ຽວຂ້ອງ ໃຫ້ຖາມທ່ານໝໍຂອງລູກຂອງທ່ານກ່ຽວກັບຄວາມສ່ຽງຕໍ່ການທີ່ເຂົາເຈົ້າຈະໄດ້ຮັບສານຕະກົ່ວ. ການກວດເລືອດຫາສານຕະກົ່ວແມ່ນບໍ່ເສຍຄ່າສໍາລັບເດັກນ້ອຍທີ່ລົງທະບຽນໃນໂຄງການທີ່ລະບຸໄວ້ຂ້າງເທິງ ແລະບໍລິສັດປະກັນສຸຂະພາບຈະຈ່າຍຄ່າກວດສອບເຊັ່ນກັນ.

## ເດັກນ້ອຍມີຄວາມສ່ຽງສູງຕໍ່ການໄດ້ຮັບສານຕະກົ່ວຖ້າເຂົາເຈົ້າ:

- **ອາໄສ** ຢູ່ໃນເຮືອນຫຼືອາຄານທີ່ສ້າງຂຶ້ນກ່ອນປີ 1978 ຫຼືຢູ່ໃກ້ກັບແຫຼ່ງການປ່ອຍອາຍພິດທາງອາກາດເຊັ່ນ: ທາງດ່ວນ, ສະຖານປະກອບການອຸດສາຫະກໍາ, ສະໜາມບິນການບິນທົ່ວໄປ, ສະຖານທີ່ລີໄຊເຄີນ.
- **ບໍລິໂພກຫຼືສໍາຜັດກັບ** ອາຫານບາງຊະນິດ, ເຄື່ອງເທດ, ການຮັກສາແຜນໂບຮານ, ຖ້ວຍຊາມ ຫຼືຜະລິດຕະພັນອື່ນໆ.
- **ໃຊ້ເວລາ** ຢູ່ນອກສະຫະລັດ ອາເມຣິກາ
- **ມີອ້າຍເອື້ອຍນ້ອງທີ່ມີ** ລະດັບສານຕະກົ່ວໃນເລືອດສູງ.
- **ມີສະມາຊິກໃນຄອບຄົວທີ່ເຮັດວຽກກັບສານຕະກົ່ວ** ເຊັ່ນ: ການກໍ່ສ້າງຫຼືທາສີ ຫຼືມີວຽກອະດິເລກທີ່ກ່ຽວຂ້ອງກັບສານຕະກົ່ວ ເຊັ່ນ: ແກ້ວສີ, ການຫາປາ, ເຄື່ອງປັ້ນດິນເຜົາ, ອາວຸດປືນ, ວັດຖຸບູຮານ.

ສໍາລັບລາຍການແຫຼ່ງທີ່ມາຂອງສານຕະກົ່ວ ສອບຖາມທ່ານໝໍຂອງທ່ານ ຫຼື ໄປທີ່:
**go.cdph.ca.gov/LeadFreeKids**

[1]WIC ແມ່ນໂຄງການໂພຊະນາການເສີມພິເສດສໍາລັບແມ່ຍິງ, ແອນ້ອຍ ແລະເດັກນ້ອຍ

## ສິ່ງທີ່ຄາດຫວັງ: ການກວດເລືອດຫາສານຕະກົ່ວສໍາລັບລູກຂອງທ່ານ



1. ການກວດສອບອາດຈະເຮັດຢູ່ຫ້ອງການທ່ານໝໍຂອງລູກຂອງທ່ານ ຫຼືຢູ່ຫ້ອງທົດລອງ.

2. ມີສອງວິທີໃນການເກັບຕົວຢ່າງເລືອດເພື່ອກວດຫາສານຕະກົ່ວ: ທາງເສັ້ນເລືອດຝອຍ ຫຼື ເສັ້ນເລືອດໃຫຍ່. ໂດຍທົ່ວໄປແລ້ວ ການກວດທາງເສັ້ນເລືອດຝອຍຈະໃຊ້ເລືອດທີ່ໄດ້ຈາກນີ້ວມືຂອງລູກຂອງທ່ານ. ການກວດທາງເສັ້ນເລືອດໃຫຍ່ຈະໃຊ້ເລືອດຈາກເສັ້ນເລືອດຢູ່ໃນແຂນຂອງລູກຂອງທ່ານ.

3. ທ່ານໝໍຂອງລູກຂອງທ່ານອາດຈະສັ່ງໃຫ້ກວດເພີ່ມເຕີມ ຂຶ້ນຢູ່ກັບຜົນໄດ້ຮັບ. ການກວດເລືອດຕິດຕາມຜົນຈະຕ້ອງເປັນການກວດທາງເສັ້ນເລືອດໃຫຍ່.

i ຖ້າຕ້ອງການຂໍ້ມູນເພີ່ມເຕີມ ໄປທີ່ **go.cdph.ca.gov/LeadFreeKids** ຫຼືຕິດຕໍ່ໂຄງການປ້ອງກັນການເປັນພິດຈາກສານຕະກົ່ວໃນໄວເດັກຂອງທ່ານ:

CDPH
California Department of Public Health

(Lao) 10/2024

© 2024, California Department of Public Health